ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ : 11 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 30 ພະຈິກ 2007

## ຄຳແນະນຳເພີ່ມເຕີມ
## ກ່ຽວກັບການຖອນເງິນສົດ ເງິນຕາຕ່າງປະເທດ

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປລາວ ສະບັບເລກທີ 05/ ສພຊ ລົງວັນທີ 14 ຕຸລາ 1999.
- ອີງຕາມລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ສປປ, ລົງວັນທີ 9 ສິງຫາ 2002.
- ອີງຕາມການເຫັນດີເປັນເອກະພາບຂອງກອງປະຊຸມວິຊາການເພື່ອປຶກສາຫາລືແກ້ໄຂບາງບັນຫາທີ່ທະນາຄານປະສົບຢູ່ໃນປະຈຸບັນ ຄັ້ງວັນທີ 29 ພະຈິກ 2007.

ຜູ້ວ່າການທະນາຄານ ແຫ່ງ ສປປລາວ ອອກຄຳແນະນຳ ເພີ່ມເຕີມ:

1. ໃຫ້ທະນາຄານທຸລະກິດສືບຕໍ່ປະຕິບັດຕາມຄຳແນະນຳເລກທີ 01/ທຫລ, ລົງວັນທີ 5 ກຸມພາ 2004 ທີ່ໄດ້ກຳນົດ ຢູ່ໃນວັກ 3 ຂໍ້ 3 ຂອງຄຳແນະນຳດັ່ງກ່າວ ໂດຍມອບໃຫ້ທະນາຄານທຸລະກິດ ເປັນຜູ້ພິຈາລະນາອະນຸຍາດຖອນເງິນສົດເງິນຕາຕ່າງປະເທດເກີນ 10.000 ໂດລາ ຫລື ເປັນເງິນຕາຕ່າງປະເທດສະກຸນອື່ນທຽບເທົ່າ ບົນຫລັກການຮູ້ລູກຄ້າຂອງຕົນ (KYC).

   ສ່ວນການລາຍງານໃຫ້ທະນາ ຄານແຫ່ງ ສປປລາວ ນັ້ນ ແມ່ນບໍ່ຈຳເປັນຕ້ອງລາຍງານທຸກໆລາຍ ໃຫ້ລາຍງານສະເພາະລາຍການຖອນຫລາຍຜິດປົກກະຕິແລະມີພິລຸດສົງໄສເທົ່ານັ້ນ.
2. ມອບໃຫ້ທ່ານຜູ້ອຳນວຍການທະນາຄານທຸລະກິດ ສຳນັກງານໃຫຍ່ ອອກແຈ້ງການແນະນຳວິທີການປະຕິບັດຕົວຈິງໃຫ້ສາຂາຂອງຕົນໃນທົ່ວປະເທດ ຕາມເນື້ອໃນຈິດໃຈດັ່ງກ່າວໃນຂໍ້ໜຶ່ງຂ້າງເທິງນີ້.
3. ໃຫ້ຫ້ອງການ, ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດແລະສະຖາບັນການເງິນ, ບຸກຄົນ ແລະ ນິຕິບຸກຄົນກ່ຽວຂ້ອງ ຈົ່ງຮັບຮູ້ ແລະປະຕິບັດຕາມຄຳແນະສະບັບນີ້ຢ່າງເຂັ້ມງວດ.
4. ຂໍ້ຕົກລົງ, ບົດແນະນຳ ແລະ ລະບຽບຫລັກການໃດທີ່ທະນາຄານແຫ່ງ ສປປລາວ ໄດ້ອອກໃນເມື່ອກ່ອນທີ່ຂັດກັບຄຳແນະນຳສະບັບນີ້ລ້ວນແຕ່ຖືກຍົກເລີກ. ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ

ພູເພັດ ຄຳພູນວົງ

ນຳສົ່ງ:

- ບັນດາກົມແລະທຽບເທົ່າ ພາຍໃນ ທຫລ — 1 ສະບັບ
- ທະນາຄານທຸລະກິດ — 1 ສະບັບ